ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.COM

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເລກທີ 0611/ສວນ

ນະຄອນຫຼວງວຽງຈັນ, ວັນທີ 16 ເມສາ 2020

ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ເລື່ອງ: ຂໍເລື່ອນມື້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຈາກ ວັນທີ 24 ເມສາ 2020 ໄປ ເປັນວັນທີ 08 ພຶດສະພາ 2020.

- **ອີງຕາມ** ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ເລື່ອງ ການຕໍ່ເວລາ ແລະ ການແນະນຳເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງ ນາຍົກ ລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດ ຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານຍະຍາດ COVID-19 .
- **ອີງຕາມ** ໜັງສືແຈ້ງເຊີນປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເລກທີ 0610/ສວນ ລົງວັນທີ 10 ເມສາ 2020.

ເພື່ອປະຕິຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ເລື່ອງ ການຕໍ່ເວລາ ແລະ ການແນະນຳເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກ ລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບ ຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19. ສະນັ້ນ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (“**ບໍລິສັດ**”) ຂໍເປັນກຽດຮຽນແຈ້ງມາຍັງທ່ານຜູ້ຖືຮຸ້ນຂອງບໍລິສັດ ຮັບຊາບວ່າ ບໍລິສັດ ຂອງພວກເຮົາ ຈະໄດ້ເລື່ອນມື້ຈັດກອງ ປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຈາກ ວັນທີ **24 ເມສາ 2020** ໄປເປັນວັນທີ **08 ພຶດສະພາ 2020** ເວລາ **14:00 ໂມງ** (ເລີ່ມລົງທະບຽນ ເວລາ 13:00 ໂມງ) ຢູ່ທີ່ ຫ້ອງໄດມ້ອນ, ຊັ້ນ 4, ໂຮງແຮມແລນມາກ ແມ່ຂອງ ຣິເວີໄຊ, ບ້ານ ທາດ ຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ສ່ວນກຳນົດການຈ່າຍເງິນປັນຜົນໃນອາລະທີ **4** ຕາມໜັງສື ເຊີນທີ່ໄດ້ແຈ້ງໃຫ້ຜູ້ຖືຮຸ້ນ ວັນທີ 11 ມີນາ 2020 ທີ່ກຳນົດເອົາວັນທີ 30 ເມສາ 2020 ເປັນມື້ຈ່າຍນັ້ນ, ແມ່ນຈະໄດ້ກຳນົດມື້ ຈ່າຍເງິນປັນຜົນໃໝ່ໃນມື້ປະຊຸມ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງຜູ້ຖືຮຸ້ນທຸກທ່ານເພື່ອຮັບຊາບ ແລະ ເຂົ້າໃຈມາ ນະທີ່ນີ້ດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

ຜູ້ອຳນວຍການໃຫຍ່

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດທາ ສຸຄະບັນດິດ